# ບົດຄວາມເພື່ອເຜີຍແຜ່ຜ່ານສື່ຕ່າງໆ

## ສິ່ງທີ່ຕ້ອງຮູ້ກ່ອນການລົງທຶນໃນຫຼັກຊັບ: ໂດຍສະເພາະແມ່ນຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ

**ຮຽບຮຽງໂດຍ: ສຸລິຍາ ໝື່ນວິເສດ**
**ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ**

ປະຈຸບັນ, ໃນ ສປປ ລາວ ມີຕົວເລືອກ ຫຼື ຊ່ອງທາງການລົງທຶນໃຫ້ແກ່ຜູ້ລົງທຶນເພີ່ມຕື່ມ ນັ້ນກໍ່ແມ່ນການລົງທຶນໃນຕະຫຼາດທຶນ. ເຖິງຢ່າງໃດກໍ່ຕາມ ໃນການລົງທຶນທຸກໆປະເພດແມ່ນມີຄວາມສ່ຽງຕິດພັນໝົດ ຈະແຕກຕ່າງກັນກໍ່ແມ່ນລະດັບຄວາມສ່ຽງຈະຫຼາຍ ຫຼື ໜ້ອຍເທົ່ານັ້ນ. ໃນບົດຄວາມນີ້ຈະສະແດງໃຫ້ທ່ານໄດ້ຮູ້ຈັກສິ່ງທີ່ຄວນຮູ້ກ່ອນການລົງທຶນໃນຕະຫຼາດທຶນ ກໍ່ຄືການລົງທຶນໃນຮຸ້ນ ຊຶ່ງມີເນື້ອໃນ ດັ່ງນີ້:

- ລົງທຶນເປັນປະຈໍາ: ການລົງທຶນຊື້-ຂາຍຮຸ້ນເປັນປະຈໍາ ຫຼື ປົກກະຕິ ເຊັ່ນ: ຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວເປັນປະຈໍາວັນ, ອາທິດ ແລະ ເດືອນ ໂດຍນໍາໃຊ້ເງິນເດືອນຂອງທ່ານຈໍານວນໃດໜຶ່ງ ຈະຊ່ວຍໃຫ້ທ່ານມີຄວາມຄຸ້ນເຄີຍກັບການລົງທຶນໃຫ້ຫຼາຍຂຶ້ນ;
- ສິ່ງທີ່ເຮັດໃຫ້ລາຍຮັບຈາກການລົງທຶນຫຼຸດລົງ: ທ່ານຄວນຄໍານຶງເຖິງອັດຕາເງິນເຟີ້, ຄ່ານາຍໜ້າ, ຄ່າທໍານຽມ ແລະ ອາກອນກໍາໄລ ຈະເປັນປັດໄຈທີ່ເຮັດໃຫ້ລາຍຮັບຈາກການລົງທຶນໃນຮຸ້ນຫຼຸດລົງ. ດັ່ງນັ້ນ, ຄິດໄລ່ຢ່າງຮອບຄອບກ່ອນຈະຕັດສິນໃຈຊື້-ຂາຍຮຸ້ນ;
- ກະຈາຍຄວາມສ່ຽງ: ຍຸດທະສາດໃນການຮັບປະກັນຜົນຕອບແທນຈາກການລົງທຶນໃນຮຸ້ນ ແມ່ນການກະຈາຍຄວາມສ່ຽງ ຊຶ່ງສາມາດເຮັດດ້ວຍການເລືອກລົງທຶນໃນຫຼັກຊັບຫຼາຍປະເພດທີ່ແຕກຕ່າງກັນເຊັ່ນ: ການຝາກເງິນກັບທະນາຄານ, ຊື້ຄໍາ ແລະ ວັດຖຸມີຄ່າອື່ນໆທີ່ມີສະພາບຄ່ອງໃນລະດັບສູງ ແລະ ປານກາງ, ຊື້ດິນ ແລະ ອື່ນໆ ເພື່ອກະຈາຍຄວາມສ່ຽງໃນການລົງທຶນຂອງທ່ານ;
- ຫຼັງຈາກທີ່ຮູ້ແລ້ວວ່າຈະລົງທຶນໃນຫຼັກຊັບປະເພດໃດ ສິ່ງທີ່ສໍາຄັນອີກອັນໜຶ່ງແມ່ນ ເຮົາຕ້ອງຮູ້ຈັກສັດສ່ວນທີ່ເໝາະສົມກັບການລົງທຶນຂອງເຮົາ ແລະ ແຕ່ລະຄົນຈະມີສັດສ່ວນການລົງທຶນໃນຫຼັກຊັບຕ່າງໆແຕກຕ່າງກັນຂຶ້ນກັບຄວາມສາມາດໃນການຮັບຄວາມສ່ຽງຂອງແຕ່ລະຄົນ;
- ກ່ອນຕັດສິນໃຈຊື້-ຂາຍຫຼັກຊັບ ເຮົາຕ້ອງຄໍານຶງເຖິງຜົນຕອບແທນທີ່ເຮົາຄາດຄະເນໄວ້ ຖ້າຜົນຕອບແທນບໍ່ເປັນໄປຕາມທີ່ເຮົາຄາດຫວັງໄວ້ ເຮົາບໍ່ຄວນຕັດສິນໃຈຊື້-ຂາຍຫຼັກຊັບດັ່ງກ່າວ;
- ໃນການລົງທຶນໃນຫຼັກຊັບຕ່າງໆ ທ່ານອາດປະສົບກັບການຂາດທຶນໃນໄລຍະເວລາໃດໜຶ່ງ ແຕ່ມັນກໍ່ເປັນປະສົບການທີ່ມີຄ່າທີ່ຈະສາມາດເຮັດໃຫ້ທ່ານ ມີຄວາມສາມາດໃນການວິເຄາະໄດ້ຫຼາຍຂຶ້ນຈາກປະສົບການຕົວຈິງໃນການລົງທຶນໃນຄັ້ງຕໍ່ໄປ. ດັ່ງນັ້ນ, ກ່ອນທີ່ຈະລົງທຶນຄວນພິຈາລະນາວ່າເຄື່ອງມືທາງການເງິນດັ່ງກ່າວແມ່ນເໝາະສົມກັບຜົນຕອບແທນທີ່ເຮົາຕັ້ງໄວ້ ຫຼື ມີຄວາມສ່ຽງທີ່ເຮົາຮັບໄດ້ ຫຼື ບໍ່?;
- ຕິດພັນກັບການລົງທຶນ ເຮົາຄວນມີການວິເຄາະຢ່າງຮອບດ້ານກ່ຽວກັບຫຼັກຊັບຕ່າງໆ ໂດຍສະເພາະແມ່ນຮຸ້ນທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຊຶ່ງໃນນັ້ນ ກໍ່ຈະມີນາຍໜ້າຊື້-ຂາຍຫຼັກຊັບໄວ້ຄອຍໃຫ້ຄໍາແນະນໍາ ແລະ ບົດວິເຄາະຕ່າງໆທີ່ກ່ຽວຂ້ອງທີ່ສາມາດນໍາມາພິນິດພິຈາລະນາກ່ອນການລົງທຶນ ແຕ່ຖ້າຈະໃຫ້ດີຜູ້ລົງທຶນເອງກໍ່ຕ້ອງໄດ້ຮໍ່າຮຽນກ່ຽວກັບການວິເຄາະໃນການລົງທຶນ;

- ຕ້ອງເລືອກນາຍໜ້າຊື້-ຂາຍຫຼັກຊັບ ທີ່ມີຄວາມຮູ້ຄວາມສາມາດສູງ ເພື່ອເຮົາຈະໄດ້ຮັບຄຳແນະນຳໃນການເລືອກເຟັ້ນເອົາຫຼັກຊັບທີ່ຈະລົງທຶນໃຫ້ມີປະສິດທິພາບ ແລະ ຮັບປະກັນຜົນຕອບແທນທີ່ເຮົາຕ້ອງການ.

ຂໍ້ມູນອ້າງອີງຈາກ:

https://www.quora.com/What-are-the-must-know-things-before-starting-stock-trading